**ມິຊຊາອາທິດທີ 28 ກຳນົດທຳມະດາປີ A**

**ວັນທີ 11 ຕຸລາ 2020**



**ພຣະວໍລະສານໂດຍນັກບຸນມັດເທວ 22, 1-14**

ໃນເວລານັ້ນ, ພຣະເຢຊູເຈົ້າຊົງກ່າວຄວາມປຽບທຽບນີ້ໃຫ້ພວກຫົວໜ້າສົງແລະພວກຟາຣີເຊວຟັງວ່າ: "ອານາຈັກສະຫວັນປຽບດັ່ງກະສັດອົງໜຶ່ງທີ່ຈັດງານວິວາຫະມຸງຄຸນໃຫ້ລາດຊະໂອລົດ. ຈຶ່ງສົ່ງພວກຄົນໃຊ້ ໄປຮຽກຜູ້ຖືກເຊີນມາໃນງານ, ແຕ່ບໍ່ມີໃຜຢາກມາ. ກະສັດຈຶ່ງສົ່ງຄົນໃຊ້ພວກອື່ນ ອອກໄປອີກສັ່ງວ່າ: "ເຮົາໄດ້ຕຽມການກິນລ້ຽງໄວ້ແລ້ວ, ເຮົາໄດ້ຂ້າງົວແລະສັດຕົວອ້ວນພີ. ທຸກສິ່ງຕຽມພ້ອມແລ້ວ, ເຊີນພວກທ່ານມາຮ່ວມໃນງານເຖີດ." ແຕ່ພວກຖືກເຊີນນັ້ນບໍ່ຫົວຊາ. ລາງຄົນໄປເບິ່ງໄຮ່ເບິ່ງນາ, ລາງຄົນໄປຄ້າຂາຍ. ອີກພວກໜຶ່ງຈັບກຸມພວກຄົນໃຊ້ທຸບຕີພວກເຂົາແລ້ວຂ້າຖິ້ມເສຍ. ເມື່ອກະສັດຊົງຊາບກໍມີຄວາມໂກດຮ້າຍຈຶ່ງສົ່ງທະຫານອອກໄປຂ້າພວກຄົນຮ້າຍເຫລົ່ານັ້ນ ແລະຈູດເຜົາເມືອງຂອງພວກເຂົາ. ແລ້ວກະສັດກ່າວກັບພວກຄົນໃຊ້ວ່າ: "ງານວິວາຫະມຸງຄຸນຈັດຕຽມພ້ອມແລ້ວ, ແຕ່ພວກຖືກເຊີນນັ້ນບໍ່ສົມຄວນ. ດັ່ງນີ້, ໃຫ້ພວກເຈົ້າໄປຕາມຖະໜົນສາຍຕ່າງໆ ພົບພໍ້ໃຜບໍ່ວ່າໃຫ້ເຊີນມາໃນງານນີ້ໝົດ". ພວກຄົນໃຊ້ກໍໄດ້ແຍກຍ້າຍກັນອອກໄປທຸກທິດທຸກທາງ ຮວບຮວມທຸກຄົນທີ່ໄດ້ພົບພໍ້ບໍ່ວ່າດີຫລືຊົ່ວ; ດັ່ງນັ້ນ, ຫ້ອງວິວາຫະມຸງຄຸນກໍເຕັມແໜ້ນດ້ວຍຄົນມາກິນລ້ຽງ. ກະສັດຈຶ່ງສະເດັດເຂົ້າມາທອດພະເນດພວກທີ່ເຂົ້າມາກິນລ້ຽງ, ແລະເຫັນຄົນຜູ້ໜຶ່ງບໍ່ນຸ່ງເຄື່ອງແບບສຳລັບງານມຸງຄຸນ, ຈຶ່ງກ່າວວ່າ: "ສະຫາຍເອີຍ, ເຫດໃດຈຶ່ງເຂົ້າມາໃນທີ່ນີ້ໂດຍບໍ່ນຸ່ງເຄື່ອງແບບສຳລັບງານມຸງຄຸນ?" ຄົນນັ້ນມິດຢູ່ບໍ່ຕອບຫຍັງ. ກະສັດຈຶ່ງຮັບສັ່ງກັບຄົນໃຊ້ວ່າ: "ຈົ່ງຈັບມັນມັດມືມັດຕີນ, ເອົາໄປຖິ້ມບ່ອນມືດທາງນອກ; ບ່ອນນັ້ນຈະມີແຕ່ຮ້ອງໄຫ້ແລະກັດແຂ້ວ". ຍ້ອນວ່າຜູ້ຖືກເຊີນມີຫລາຍ, ແຕ່ຜູ້ຖືກເລືອກນັ້ນມີໜ້ອຍ."

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 22, 1-14**

ວາຈາພຣະເຈົ້າໃນບົດອ່ານທີໜຶ່ງຈາກໜັງສືຂອງປະພາສົກອີຊາຢາແລະໃນພຣະວໍລະສານວັນນີ້ລ້ວນແຕ່ກ່າວເຖິງງານລ້ຽງ, ງານວິວາຫະມຸງຄຸນ.

ໃນບົດອ່ານທີໜຶ່ງ, ປະພາສົກອີຊາຢາກ່າວວ່າ: "ໃນວັນນັ້ນຢູ່ເທິງພູນີ້, ພຣະອົງເຈົ້າແຫ່ງໂລກພິພົບຈະຊົງຈັດຕຽມງານລ້ຽງສຳລັບນານາຊາດອັນມີແຕ່ເນື້ອຢ່າງດີແລະເຫລົ້າອະງຸ່ນຢ່າງປຸກໆ". ໃນພຣະຄຳພີ, ພູເຂົາເປັນສະຖານທີ່ແຫ່ງການພົບພໍ້ກັບພຣະເຈົ້າ. ແລະງານລ້ຽງເປັນເຄື່ອງໝາຍແຫ່ງຄວາມຜູກສຳພັນໄມຕຣີ, ແຫ່ງຄວາມມ່ວນຊື່ນ, ແຫ່ງພັນທະສັນຍາ. ແລະສິ່ງສຳຄັນກໍຄືຜູ້ທີ່ຖືກເຊີນມາໃນງານລ້ຽງນີ້ບໍ່ໄດ້ສະເພາະເຈາະຈົງເຖິງເຊື້ອຊາດແລະຊົນຊັ້ນວັນນະ. ທຸກຄົນລ້ວນແຕ່ໄດ້ຮັບເຊີນມາຮ່ວມໃນງານລ້ຽງຂອງພຣະເຈົ້າແຫ່ງໂລກພິພົບ.

ສ່ວນໃນພຣະວໍລະສານ, ນັກບຸນມັດເທວໄດ້ອະທິບາຍໃຫ້ພວກເຮົາເຂົ້າໃຈແຈ້ງຕື່ມອີກວ່າ ງານວິວາຫະມຸງຄຸນນີ້ປຽບດັ່ງອານາຈັກສະຫວັນ. ຜູ້ເປັນເຈົ້າພາບແມ່ນກະສັດ. ແລະຜູ້ເປັນເຈົ້າບ່າວແມ່ນລູກຊາຍຂອງກະສັດ. ຈາກນັ້ນ, ກະສັດກໍສັ່ງຄົນໃຊ້ໄປເຊີນແຂກທີ່ຖືກເຊີນມາຮ່ວມງານລ້ຽງ. ແຂກທີ່ຮັບເຊີນນີ້, ນັກບຸນມັດເທວບໍ່ໄດ້ບອກລາຍລະອຽດໃຫ້ພວກເຮົາຮູ້ວ່າແມ່ນໃຜ. ສິ່ງທີ່ພວກເຮົາສາມາດຮູ້ໄດ້ນັ້ນແມ່ນບັນດາຜູ້ຮັບເຊີນນີ້ບໍ່ໄດ້ໃຫ້ຄວາມສຳຄັນກັບງານວິວາຫະມຸງຄຸນຂອງກະສັດ. ພວກເຂົາບໍ່ພຽງແຕ່ປະຕິເສດຄຳເຊີນດ້ວຍການຫາຂໍ້ອ້າງມາບັງໜ້າເທົ່ານັ້ນ, ແຕ່ພວກເຂົາຍັງທຳຮ້າຍແລະຂ້າຄົນໃຊ້ຂອງກະສັດອີກ. ຜົນທີ່ຕາມມາກໍຄື, ກະສັດໄດ້ສັ່ງໃຫ້ທຳລາຍບັນດາຜູ້ທີ່ຖືກເຊີນນັ້ນໃຫ້ໝົດ.

ເທື່ອນີ້, ກະສັດໄດ້ບອກໃຫ້ຄົນໃຊ້ໄປເຊີນທຸກຄົນທີ່ພົບເຫັນຕາມທາງບໍ່ວ່າຈະເປັນຄົນດີຫລືຄົນບໍ່ດີ. ເພາະງານວິວາຫະມຸງຄຸນໄດ້ຕຽມພ້ອມແລ້ວ. ຖ້າກະສັດໃຫ້ເຊີນທຸກຄົນມາຮ່ວມງານລ້ຽງແລ້ວເປັນຫຍັງທ່ານຈຶ່ງກ່າວກັບຄົນຜູ້ໜຶ່ງໃນງານລ້ຽງນີ້ວ່າ: "ສະຫາຍເອີຍ, ເຫດໃດເຈົ້າຈຶ່ງເຂົ້າມາໃນທີ່ນີ້ໂດຍບໍ່ນຸ່ງເຄື່ອງແບບສຳລັບງານມຸງຄຸນ?". ແທນທີ່ຄົນຜູ້ນັ້ນຈະອະທິບາຍໃຫ້ກະສັດເຂົ້າໃຈ, ເຂົາພັດບໍ່ເວົ້າຫຍັງ. ເຄື່ອງແບບສຳລັບງານມຸງຄຸນນີ້ແມ່ນຫຍັງ? ເຄື່ອງແບບສຳລັບງານມຸງຄຸນນີ້ອາດຈະແມ່ນຈິດໃຈຂອງຄົນຜູ້ນັ້ນເອງ. ເຂົາຖືກເຊີນມາໃນງານລ້ຽງແຕ່ເຂົາອາດບໍ່ຮູ້ຈັກຄຸນຄ່າຂອງງານລ້ຽງ, ບໍ່ມີຄວາມມ່ວນຊື່ນໃນຈິດໃຈ. ດ້ວຍເຫດນີ້, ກະສັດຈຶ່ງໄລ່ເຂົາອອກຈາກງານວິວາຫະມຸງຄຸນ. ແນ່ນອນ, ງານວິວາຫະມຸງຄຸນຂອງລູກຊາຍກະສັດທີ່ນັກບຸນມັດເທວກ່າວມານີ້ ແມ່ນງານວິວາຫະມຸງຄຸນຂອງພຣະຊຸມພານ້ອຍ ຫລືເວົ້າອີກຢ່າງແມ່ນມະຫາບູຊາມິຊຊານັ້ນເອງ. ພວກເຮົາທຸກຄົນລ້ວນແຕ່ໄດ້ຮັບເຊີນມາຮ່ວມມະຫາບູຊາມິຊຊາ, ອັນແມ່ນງານລ້ຽງຂອງພຣະເຢຊູເຈົ້າ. ອາຫານແລະເຄື່ອງດື່ມທີ່ພວກເຮົາຈະຮັບກິນນັ້ນແມ່ນເນື້ອແລະເລືອດຂອງພຣະອົງນັ້ນເອງ. ແຕ່ພວກເຮົາໄດ້ສຳນຶກເຖິງຄວາມສຳຄັນແລະຄວາມຮັກທີ່ພຣະອົງມີຕໍ່ພວກເຮົາບໍ? ພວກເຮົາໄດ້ກະກຽມຈິດໃຈພວກເຮົາກ່ອນທີ່ຈະຮັບພຣະອົງເຂົ້າມາໃນໃຈພວກເຮົາບໍ?

**ພາວະນາ**

ໂອພຣະເຈົ້າ, ໂຜດໃຫ້ລູກສຳນຶກໄດ້ວ່າ, ທຸກຄັ້ງທີ່ລູກມາຮ່ວມມະຫາບູຊາມິຊຊາແມ່ນລູກມາຮ່ວມງານວິວາຫະມຸງຄຸນຂອງພຣະຊຸມພານ້ອຍ ອັນແມ່ນພຣະເຢຊູເຈົ້າຜູ້ໄດ້ມອບຕົວພຣະອົງເອງເປັນອາຫານເພື່ອລ້ຽງຊີວິດວິນຍານລູກ. ໂຜດໃຫ້ລູກໄດ້ຕຽມພ້ອມຈິດໃຈໃຫ້ສະອາດບໍລິສຸດເພື່ອຈະສົມເຂົ້າຮ່ວມງານວິວາຫະມຸງຄຸນສຳຄັນນີ້ດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ